ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 260 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 02 ພະຈິກ 2023

# ໃບແຈ້ງເຊີນເຂົ້າຮ່ວມແຂ່ງຂັນປະມູນ

ເຖິງ: ບໍລິສັດ .............................................................................................

ເລື່ອງ: ເຂົ້າຮ່ວມການປະມູນໂຄງການຈັດຊື້ປ່ຽນຖ່າຍລະບົບແມ່ຂ່າຍຂອງ ທຫລ.

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງຫ້ອງການ ເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2023;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ປ່ຽນຖ່າຍລະບົບແມ່ຂ່າຍຂອງ ທຫລ ເລກທີ 880/ທຫລ, ລົງວັນທີ 12 ກັນຍາ 2023.

ຫ້ອງການ, ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງທ່ານຊາບວ່າ ຈະມີການປະມູນແບບເປີດກວ້າງສະເພາະພາຍໃນ ສປປ ລາວ ໃນໂຄງການຈັດຊື້ປ່ຽນຖ່າຍລະບົບແມ່ຂ່າຍຂອງ ທຫລ ຖ້າບໍລິສັດຫາກມີຄວາມຕ້ອງການເຂົ້າຮ່ວມປະມູນລະບົບແມ່ຂ່າຍດັ່ງກ່າວຕ້ອງມີເງື່ອນໄຂດັ່ງນີ້:

1. ໃບອະນຸຍາດດໍາເນີນທຸລະກິດ (ທະບຽນວິສາຫະກິດ, ເລກປະຈໍາຕົວຜູ້ເສຍອາກອນ,ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນຕາມກົດໝາຍ) ໂດຍເຈົ້າຂອງທະບຽນວິສາຫະກິດຖືສັນຊາດລາວ;
2. ມີການຢັ້ງຢືນກ່ຽວກັບຜົນງານ, ປະສົບການ, ຄວາມສາມາດດ້ານເຕັກນິກວິຊາການ ແລະ ການດໍາເນີນທຸລະກິດທີ່ມີຄຸນນະພາບດີ ໃນວຽກງານລະບົບແມ່ຂ່າຍ;
3. ມີໃບລາຍງານຖານະການເງິນທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ 1, 2 ຫລື 3 ປີຍ້ອນຫຼັງ;
4. ສັນຍາວ່າຈ້າງພະນັກງານ ດ້ານວຽກງານການອອກແບບ, ຕິດຕັ້ງ, ຕັ້ງຄ່າ, ໂອນຍ້າຍ ແລະ ທົດສອບລະບົບ ທີ່ມີຄວາມຊ່ຽວຊານສະເພາະດ້ານ ທີ່ຖືສັນຊາດລາວ;
5. ມີໜັງສືຄໍ້າປະກັນການປະມູນຈາກທະນາຄານທຸລະກິດໃດໜຶ່ງ ໃນມູນຄ່າການຄໍ້າປະກັນ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ;
6. ເງື່ອນໄຂອື່ນໆຕາມທີ່ລະບຸໄວ້ໃນເອກະສານບົດແນະນໍາການສະເໜີໂຄງການ ຂອງ ທຫລ ພາຍຫຼັງຊື້ຊອງປະມູນ;
7. ບໍລິສັດທີ່ເຂົ້າຮ່ວມປະມູນຕ້ອງຊື້ຊອງປະມູນ ໃນລາຄາ **3.000.000** ກີບ/ຊອງ, ຖ້າບໍລິສັດໃດບໍ່ຊະນະການປະມູນທາງຫ້ອງການ ຈະບໍ່ສົ່ງເງິນຄືນ.

ໝາຍເຫດ: ບັນດາທ່ານທີ່ສົນໃຈສາມາດຊື້ຊອງປະມູນແຕ່ວັນທີ 01-21 ພະຈິກ 2023. ພະແນກບໍລິຫານ, ຫ້ອງການທະນາຄານແຫ່ງ ສປປ ລາວ, ຕັ້ງຢູ່ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທ 021 241268.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເຂົ້າຮ່ວມການປະມູນດ້ວຍ.

**ຫົວໜ້າຫ້ອງການ**

ຜູ້ປະສານງານ:
ທ່ານ ເປດ ອິນພົມທິລາດ 020 22220787
ທ່ານ ທະຍຸຍຄໍາ ພົນິດ 020 28141989

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພານຸສັກ ແກ້ວວົງພະຈັນ